# ປະກາດ ຮັບ

ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA) ເຮັດວຽກສົ່ງເສີມກ່ຽວກັບກະສິກຳແບບຍືນຍົງ, ສືກສາຜົນກະທົບຂອງສາເຄມີໃນການນຳໃຊ້ກັບການເຮັດກະສິກຳແລະຄວາມຫລາກຫລາຍທາງດ້ານຊີວະພາບຂອງຊັບພະຍາກອນທຳມະຊາດ ເພື່ອຈັດຕັ້ງປະຕິບັດໂຄງການ ໂຄງການສົ່ງເສີມກະສິກຳປັບຕົວເຂົ້າກັບອາກາດປ່ຽນແປງ ແລະ ການເຂົ້າເຖິງການຕະຫຼາດເພື່ອຊາວກະສິກອນໜຸ່ມ ໃນ **4** ບ້ານ (ບ້ານນ້ຳແງ້ນ, ບ້ານນຳ້ທຸງ, ບ້ານປາສັກ ແລະ ບ້ານປຸ່ງ), ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ ເລີ່ມແຕ່ **01/11/2024-14/10/2026.** ໂຄງການແມ່ນໄດ້ຮ່ວມຈັດຕັ້ງປະຕິບັດສະຫວ່າງຫ້ອງການກະສິກຳ ແລະ ປ່າໄມ້ເມືອງຫຼວງນ້ຳທາ ຮ່ວມກັບ ສະມາຄົມພັດທະນາກະສິກຳ ແລະສິ່ງແວດລ້ອມແບບຍືນຍົງ **(SAEDA).** ໂຄງການ ແມ່ນໄດ້ຮັບທຶນສະໜັບສະໜູນ ໂດຍ ອົງການ Solidaritätsdienst International (SODI) and ກະຊວງຮ່ວມມືເສດຖະກິດ ແລະ ພັດທະນາ (Federal Ministry for Economic Cooperation and Development-BMZ). ມີຄວາມຕ້ອງການຮັບພະນັກງານ 1 **ຕຳແໜ່ງ**: ຜູ້ປະສານງານຂັ້ນແຂວງ 1 ຕຳແໜ່ງ ປະຈຳໂຄງການຢູ່ຫ້ອງການ ເມືອງຫຼວງນ້ຳທາ ແຂວງຫຼວງນ້ຳທາ ໄລຍະເວລາ **2** ປີ

**ໜ້າທີ່ຮັບຜິດຊອບ:**

- ສ້າງແຜນກິດຈະກຳປະຈຳປີ ປະຈຳໄຕມາດ ແລະ ປະຈຳເດືອນ ພ້ອມນຳພາທີມງານຈັດຕັ້ງປະຕິບັດກິດຈະກຳ
- ຈັດຕັ້ງປະຕິບັດ, ສົ່ງເສີມ ແລະ ພັດທະນາກິດຈະກຳດ້ານກະສິກຳ, ໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມຄວາມເຂັ້ມແຂງ, ລະບົບການດຳລົງຊີວິດໃນຊຸມຊົນໃນບ້ານເປົ້າ ໝາຍຂອງໂຄງການ;
- ປະສານງານກັບລະຫວ່າງສະມາຄົມ SAEDA ວຽງຈັນ, ແລະ ພາກລັດຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
- ຕິດຕາມ ກວດກາ ແລະ ຊຸກຍູ້ວຽກງານຂອງໂຄງການທີ່ຮັບຜິດຊອບ.
- ລາຍງານການຈັດຕັ້ງກິດຈະກຳ ປະຈຳເດືອນ ແລະ ປະຈຳປີ ໃຫ້ສາຍງານ ແລະ ຄູ່ຮ່ວມງານຕາມຄວາມຕ້ອງການ.

**ຄຸນນະວຸດ ແລະ ມາດຖານຕ້ອງການ:**

- ຮຽນຈົບປະລິນຍາຕີ ຫຼື ທຽບເທົ່າ ດ້ານກະສິກຳ ແລະ ອື່ນໆທີ່ກ່ຽວຂ້ອງ;
- ສັນຊາດລາວ ມີອາຍຸລະຫວ່າງ 25-50 ປີ;
- ມີປະສົບການເຮັດວຽກດ້ານກະສິກຳມາກ່ອນຫຼາຍກວ່າ 3-5 ປີ;
- ເຄີຍເຮັດວຽກນຳພາກລັດ ຫຼື ອົງການຈັດຕັ້ງສາກົນ ຫຼື ສະມາຄົມ ຫຼື ບໍລິສັດ;
- ສາມາດນຳໃຊ້ຄອມພິວເຕີ : Word, Excel, Power point, Publisher, ອິນເຕີເນັດ ແລະ ອື່ນໆ;
- ສາມາດເວົ້າ ແລະ ຂຽນພາສາອັງກິດໄດ້ດີພໍສົມຄວນ;
- ຖ້າເປັນຄົນຖິ່ນຖານຢູ່ນະຄອນຈຳປາສັກຈະພິຈາລະນາເປັນພິເສດ;
- ມີສຸຂະພາບແຂງແຮງດີ ແລະ ສາມາດເຮັດວຽກໃນເຂດຫ່າງໄກສອກຫລີກໄດ້;
- ມີຄວາມຮັບຜິດຊອບສູງ, ມີຫົວຄິດປະດິດສ້າງ, ກະຕືລືລົ້ນໃນການຮຽນຮູ້ເອົາບົດຮຽນອັນໃໝ່, ມີຄວາມອົດທົນ, ມີຄວາມອ່ອນໄຫວ ແລະ ການເຮັດວຽກເປັນທີມໄດ້ດີ;
- ຈະຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ;
- ສາມາດເລີ່ມວຽກ 01/11/2024

ທ່ານໃດສົນໃຈສາມາດຍື່ນຄຳຮ້ອງສະໝັກຂຽນດ້ວຍຕົວເອງ ພ້ອມດ້ວຍ ຊີວະປະຫວັດ, ໃບປະ ກາດ, ໃບຜ່ານງານ,ໃບແຈ້ງໂທດ,ອັດປື້ມສຳມະໂນຄົວ/ບັດປະຈຳຕົວແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງມາທີ່. ສະເການ ສົ່ງມາທາງອີແມວ: infor.saedalaos@gmail.com;

ປິດຮັບສະໝັກ ວັນທີ 31/10/**2024**